# ກົດລະບຽບໃໝ່ຂອງໂຄງການຊ່ວຍເຫຼືອດ້ານວຽກ ແລະຄວາມຮັບຜິດຊອບຕໍ່ເດັກໃນຄາລີຟໍເນັຽ (CALWORKS) ສໍາລັບກໍລະນີ SAFETY NET ແລະ CHILD-ONLY ບາງກໍລະນີ

**ກົດລະບຽບກ່ຽວກັບຄ່າລ້ຽງດູລູກໄດ້ມີການປ່ຽນແປງ ສໍາລັບຄອບຄົວຂອງທ່ານ.** ທ່ານກໍາລັງໄດ້ການຊ່ວຍເຫຼືອດ້ານເງິນສົດຂອງ CalWORKs ສະເພາະສໍາລັບລູກຂອງທ່ານ. ຕໍ່ໄປນີ້ແມ່ນການປ່ຽນແປງຕ່າງໆ ທີ່ຈະນໍາໃຊ້ກັບທ່ານ:

- ທ່ານບໍ່ຈໍາເປັນຕ້ອງ "ມອບໝາຍ" ສິດທິດ້ານເງິນຄ່າລ້ຽງດູລູກໃຫ້ແກ່ທາງຄາວຕີ້ ອີກຕໍ່ໄປ, ຢ່າງໃດກໍຕາມ ມີຜົນປະໂຫຍດການຊ່ວຍເຫຼືອຕ່າງໆ ໃຫ້ສໍາລັບທ່ານ ແລະລູກຂອງທ່ານ ໂດຍການເຮັດເລື້ອງເງິນຄ່າລ້ຽງດູລູກກັບທາງອົງການ ດູແລເລື້ອງຄ່າລ້ຽງດູລູກຂອງທ້ອງຖິ່ນ (Local Child Support Agency: LCSA);

- ຈໍານວນເງິນຊ່ວຍເຫຼືອຂອງທ່ານຈະບໍ່ປ່ຽນແປງ ຖ້າວ່າ ທ່ານບໍ່ຕ້ອງການບໍລິການຈາກທາງ LCSA, ລວມເຖິງ ການຊອກຫາພໍ່ແມ່ທີ່ບໍ່ມີສິດປົກຄອງລູກ (ພໍ່ແມ່ທີ່ຂາດຫາຍໄປ) ຫຼື ການຈັດຕັ້ງຄວາມເປັນພໍ່ສໍາລັບລູກຂອງທ່ານ;

    - ທ່ານຄວນຮັບຮູ້ວ່າ ການຊອກຫາພໍ່ແມ່ທີ່ບໍ່ມີສິດປົກຄອງລູກ ແລະການຈັດຕັ້ງຄວາມເປັນພໍ່ ຈະເປັນການຊ່ວຍເຫຼືອທ່ານໃນອະນາຄົດໃນການເກັບກໍາເອົາເງິນຄ່າລ້ຽງດູລູກ ຖ້າວ່າ ທ່ານຕ້ອງການ;

    - ໃນອະນາຄົດ, ຖ້າວ່າ ທ່ານກາຍເປັນຜູ້ມີສິດໄດ້ຮັບການຊ່ວຍເຫຼືອດ້ານເງິນສົດ, ກໍອາດມີການນໍາໃຊ້ກົດລະບຽບທີ່ແຕກຕ່າງກັນດ້ານເງິນຄ່າລ້ຽງດູລູກ.

- ທ່ານຈະສາມາດເກັບກໍາເງິນຄ່າລ້ຽງດູລູກທັງໝົດ ທີ່ທາງພໍ່ແມ່ທີ່ບໍ່ມີສິດປົກຄອງລູກໃຫ້ທ່ານ ຫຼື ທີ່ທາງອົງການດູແລເລື້ອງຄ່າລ້ຽງດູລູກ (LCSA) ໃນທ້ອງຖິ່ນເກັບກໍາໃຫ້ທ່ານ. ທ່ານບໍ່ຈໍາເປັນຕ້ອງ ເອົາເງິນດັ່ງກ່າວນີ້ໃຫ້ທາງຄາວຕີ້;

- ຖ້າຫາກ ທ່ານໄດ້ເປີດເລື້ອງໄວ້ກັບທາງ LCSA ແລ້ວ ທ່ານກໍບໍ່ຈໍາເປັນຕ້ອງເຮັດຫຍັງເພື່ອຮັກສາເງິນຄ່າລ້ຽງດູລູກທີ່ເກັບກໍາໃຫ້ທ່ານ. ຂໍໃຫ້ຕິດຕາມ ບັນທຶກຈໍານວນເງິນຄ່າລ້ຽງດູລູກທີ່ທ່ານໄດ້ຮັບ ແລະວັນທີທີ່ໄດ້ຮັບ. ທ່ານຈະຈໍາເປັນຕ້ອງໃຊ້ໃນການລາຍງານເງິນຊ່ວຍຄ່າລ້ຽງດູລູກ ທີ່ທ່ານໄດ້ຮັບ ໃຫ້ແກ່ທາງຄາວຕີ້;

- ຖ້າຫາກ ທ່ານບໍ່ໄດ້ເປີດເລື້ອງໄວ້ກັບທາງ LCSA, ທ່ານຈໍາຕ້ອງ ສະໝັກຂໍຮັບບໍລິການດ້ານເງິນຄ່າລ້ຽງດູລູກ ທີ່ LCSA ເພື່ອຂໍໃຫ້ມີການຈັດຕັ້ງຄວາມເປັນພໍ່ສໍາລັບລູກຂອງທ່ານ ຖ້າວ່າຈໍາເປັນ, ແລະເພື່ອຂໍໃຫ້ມີການເກັບເງິນຄ່າລ້ຽງດູລູກ ແລະສົ່ງໃຫ້ທ່ານ. ທາງຄາວຕີ້ສາມາດຊ່ວຍທ່ານເຮັດແນວນີ້ໄດ້;

- ເງິນຄ່າລ້ຽງດູລູກທີ່ເກັບກໍາໂດຍທາງ LCSA ແລະສົ່ງໃຫ້ທ່ານຈະບໍ່ຈໍາເປັນຕ້ອງເອົາໄປຈ່າຍຄືນເງິນຊ່ວຍເຫຼືອ ທີ່ຈ່າຍໃຫ້ແກ່ຄອບຄົວຂອງທ່ານອີກຕໍ່ໄປ ດັ່ງນັ້ນ ການນັບເວລາ 48 ເດືອນສໍາລັບຜູ້ໃຫຍ່ຂອງ CalWORKs ຈະບໍ່ "ນັບ" ຈໍານວນເດືອນທີ່ຊ່ວຍເຫຼືອອີກຕໍ່ໄປ;

- ເມື່ອທ່ານໄດ້ຮັບເງິນຄ່າລ້ຽງດູລູກໂດຍກົງ, ດຽວນີ້ ທ່ານຈໍາຕ້ອງລາຍງານເງິນຄ່າລ້ຽງດູລູກ ໃນຖານະເປັນເງິນລາຍໄດ້ ຖ້າວ່າ ກົດລະບຽບດ້ານການລາຍງານລາຍໄດ້ກໍານົດໃຫ້ທ່ານ ຕ້ອງລາຍງານໃນກໍລະນີນີ້ດ້ວຍ;

- ຖ້າຫາກ ທ່ານມີລາຍໄດ້ຈາກເງິນຄ່າລ້ຽງດູລູກ, ສໍາລັບເດັກທີ່ຢູ່ໃນໂຄງການ CalWORKs, ພວກເຮົາຈະບໍ່ນັບ ຈໍານວນ $50 ທໍາອິດ ໃນແຕ່ລະເດືອນ. ເງິນສ່ວນຍັງເຫຼືອອາດນັບໃສ່ ຕໍ່ກັບເງິນຊ່ວຍເຫຼືອ CalWORKs ຂອງທ່ານ;

- ຖ້າຫາກ ທ່ານຍັງໄດ້ຮັບ CalFresh, ເງິນລາຍໄດ້ຈາກ ເງິນຄ່າລ້ຽງດູລູກທີທ່ານໄດ້ຮັບ ອາດຖືກນໍາໃຊ້ເພື່ອຄິດໄລ່ຈໍານວນເງິນຊ່ວຍເຫຼືອ CalFresh ຂອງທ່ານ.

**ຖ້າຫາກ ທ່ານມີຄໍາຖາມໃດໆ, ກະຣຸນາໂທຣຫາຄາວຕີ້ໄດ້ທັນທີ.**